ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 116 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍສະຫະກອນ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 122/ສພຊ, ລົງວັນທີ 28 ມິຖຸນາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະຫະກອນ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 16/ຄປຈ, ລົງວັນທີ 29 ກໍລະກົດ 2024.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍສະຫະກອນ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 122 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 / 06 / 24

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສະຫະກອນ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສະຫະກອນ ໃນວາລະຂອງກອງປະຊຸມຄັ້ງວັນທີ 19 ມິຖຸນາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງວັນທີ 28 ມິຖຸນາ 2024.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສະຫະກອນ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປະທານສະພາແຫ່ງຊາດ ★ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 54 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2024

# ກົດໝາຍ
# ວ່າດ້ວຍສະຫະກອນ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມ ກວດກາ ສະຫະກອນ ເພື່ອສົ່ງເສີມ, ພັດທະນາ ການຜະລິດ, ການບໍລິການ ແລະ ການດຳເນີນກິດຈະການ ຂອງສະຫະກອນ ໃຫ້ເຕີບໃຫຍ່ຂະຫຍາຍຕົວ, ເຂັ້ມແຂງ ແນໃສ່ຮັບປະກັນການແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ສະຫະກອນ

ສະຫະກອນ ແມ່ນ ການຈັດຕັ້ງເສດຖະກິດລວມໝູ່ຂອງປະຊາຊົນລາວ ທີ່ປະກອບອາຊີບ ກະສິກຳ, ຫັດຖະກຳ, ຄ້າຂາຍ, ບໍລິການ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນ ດ້ວຍຄວາມສະໝັກໃຈ ເພື່ອຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ດ້ານທຶນ, ປະສົບການ, ເຕັກນິກ, ວິຊາການ, ການແກ້ໄຂບັນຫາຮ່ວມກັນ ແລະ ການແບ່ງປັນຜົນປະໂຫຍດຈາກການດຳເນີນກິດຈະການ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ກຸ່ມ** ໝາຍເຖິງ ການຈັດຕັ້ງລວມໝູ່ຂອງປະຊາຊົນລາວ ທີ່ມີອາຊີບ ກະສິກຳ, ຫັດຖະກຳ, ຄ້າຂາຍ, ບໍລິການ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະ ກັນ ລະຫວ່າງສະມາຊິກ ແລະ ຄອບຄົວສະມາຊິກດ້ວຍກັນ ທາງດ້ານການຜະລິດ ແລະ ການບໍລິການ;
2. **ຮຸ້ນ** ໝາຍເຖິງ ທຶນຂອງສະຫະກອນໃດໜຶ່ງ ຊຶ່ງແບ່ງອອກເປັນສ່ວນ ທີ່ມີມູນຄ່າເທົ່າກັນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະຫະກອນ;

3. **ໃບອະນຸຍາດດຳເນີນກິດຈະການສະຫະກອນ** ໝາຍເຖິງ ເອກະສານຮັບຮອງໃນການອະນຸຍາດດຳເນີນກິດຈະການສະຫະກອນ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

4. **ນະວັດຕະກຳ** ໝາຍເຖິງ ການນຳໃຊ້ຄວາມຮູ້, ຄວາມສາມາດ, ກຳມະວິທີການຜະລິດ ແລະ ປະສົບການດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຄົ້ນຄວ້າ, ປະດິດສ້າງ, ບໍລິການ, ພັດທະນາ ຜະລິດຕະພັນ ແລະ ສິນຄ້າທີ່ມີຄຸນນະພາບສູງໃນຮູບແບບໃໝ່ ອອກສູ່ສັງຄົມ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານສະຫະກອນ**

ລັດ ຊຸກຍູ້ ແລະ ສົ່ງເສີມ ວຽກງານສະຫະກອນ ດ້ວຍການວາງນະໂຍບາຍ, ສ້າງກົນໄກ, ເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ສະຫະກອນ ມີການເຕີບໃຫຍ່ຂະຫຍາຍຕົວ, ເຂັ້ມແຂງ ຕາມທິດສີຂຽວ ແລະ ຍືນຍົງ, ສ້າງລາຍຮັບ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ.

ລັດ ສົ່ງເສີມ, ພັດທະນາກຸ່ມ ໃຫ້ເຂັ້ມແຂງ ດ້ວຍການສະໜັບສະໜູນ ດ້ານເຕັກນິກ, ວິຊາການ ແລະ ອຳນວຍຄວາມສະດວກ ໃຫ້ແກ່ກຸ່ມ ເພື່ອກ້າວເປັນສະຫະກອນ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນການສົ່ງເສີມວຽກງານສະຫະກອນ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານສະຫະກອນ**

ວຽກງານສະຫະກອນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນສິດ ແລະ ຜົນປະໂຫຍດຂອງ ສະມາຊິກ, ສະຫະກອນ ແລະ ລັດ;
4. ຮັບປະກັນການສ້າງວຽກເຮັດງານທຳ ແລະ ຍົກສູງຄຸນນະພາບຊີວິດການເປັນຢູ່ຂອງສະມາຊິກສະຫະກອນ;
5. ຮັບປະກັນຄວາມ ສະເໝີພາບ, ສະດວກ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;
6. ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະ ພົວພັນ ກ່ຽວກັບວຽກງານສະຫະກອນ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະຫະກອນ ດ້ວຍການ ແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ພັດທະນາຊັບພະຍາກອນມະນຸດ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

# ພາກທີ II
# ປະເພດສະຫະກອນ

**ມາດຕາ 8 ປະເພດສະຫະກອນ**

ປະເພດສະຫະກອນ ມີ ດັ່ງນີ້:

1. ສະຫະກອນກະສິກຳ ແລະ ປ່າໄມ້;
2. ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
3. ສະຫະກອນການຄ້າ;
4. ສະຫະກອນຫັດຖະກຳ ແລະ ປຸງແຕ່ງ;
5. ສະຫະກອນການບໍລິການ;
6. ສະຫະກອນອື່ນ.

**ມາດຕາ 9 ສະຫະກອນກະສິກຳ ແລະ ປ່າໄມ້**

ສະຫະກອນກະສິກຳ ແລະ ປ່າໄມ້ ແມ່ນ ການຈັດຕັ້ງເສດຖະກິດລວມໝູ່ຂອງປະຊາຊົນລາວ ທີ່ປະກອບອາຊີບ ປູກຝັງ, ລ້ຽງສັດ, ປະມົງ, ປຸງແຕ່ງ ແລະ ບໍລິການ ດ້ານກະສິກຳ ແລະ ປ່າໄມ້.

**ມາດຕາ 10 ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແມ່ນ ການຈັດຕັ້ງເສດຖະກິດລວມໝູ່ຂອງປະຊາຊົນລາວ ທີ່ຮ່ວມທຶນກັນ ຝາກປະຢັດ ແລະ ປ່ອຍສິນເຊື່ອ ໃຫ້ແກ່ສະມາຊິກພາຍໃນສະຫະກອນຕົນ ເພື່ອນຳໃຊ້ເຂົ້າໃນການ ຜະລິດ ແລະ ກິດຈະກຳຂອງຄອບຄົວ.

**ມາດຕາ 11 ສະຫະກອນການຄ້າ**

ສະຫະກອນການຄ້າ ແມ່ນ ການຈັດຕັ້ງເສດຖະກິດລວມໝູ່ຂອງປະຊາຊົນລາວ ທີ່ປະກອບອາຊີບ ຊື້ ຂາຍ ແລະ ແລກປ່ຽນ ສິນຄ້າ.

**ມາດຕາ 12 ສະຫະກອນຫັດຖະກຳ ແລະ ປຸງແຕ່ງ**

ສະຫະກອນຫັດຖະກຳ ແລະ ປຸງແຕ່ງ ແມ່ນ ການຈັດຕັ້ງເສດຖະກິດລວມໝູ່ຂອງປະຊາຊົນລາວ ທີ່ປະກອບອາຊີບ ຜະລິດ, ຈັກສານ, ຕ່ຳແຜ່ນ, ປັ້ນດິນເຜົາ, ປຸງແຕ່ງອາຫານ, ເຄື່ອງດື່ມ ແລະ ອາຊີບອື່ນ.

**ມາດຕາ 13 ສະຫະກອນການບໍລິການ**

ສະຫະກອນການບໍລິການ ແມ່ນ ການຈັດຕັ້ງເສດຖະກິດລວມໝູ່ຂອງປະຊາຊົນລາວ ທີ່ປະກອບອາຊີບ ຂົນສົ່ງ, ທ່ອງທ່ຽວ, ກໍ່ສ້າງ, ແພດ ແລະ ອາຊີບອື່ນ.

# ພາກທີ III
# ການສ້າງຕັ້ງ ແລະ ການເຄື່ອນໄຫວ ສະຫະກອນ
## ໝວດທີ 1
## ການສ້າງຕັ້ງສະຫະກອນ

**ມາດຕາ 14 ເງື່ອນໄຂການສ້າງຕັ້ງສະຫະກອນ**

ການສ້າງຕັ້ງສະຫະກອນ ມີເງື່ອນໄຂ ດັ່ງນີ້:

1. ມີຄວາມສະໝັກໃຈສ້າງຕັ້ງສະຫະກອນ;

2. ມີສະມາຊິກຢ່າງໜ້ອຍ ເຈັດຄົນ ຊຶ່ງເປັນພົນລະເມືອງລາວ ແລະ ສະມາຊິກແຕ່ລະຄົນ ບໍ່ໄດ້ຢູ່ໃນສຳມະໂນຄົວດຽວກັນ;

3. ມີກົດລະບຽບ, ຫ້ອງການ, ທຶນ ແລະ ຊັບສິນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຂອງສະຫະກອນ;

4. ມີສະມາຊິກ ຢ່າງໜ້ອຍ ໜຶ່ງຄົນ ທີ່ຜ່ານການຝຶກອົບຮົມ ກ່ຽວກັບວຽກງານສະຫະກອນ ໂດຍມີໃບຢັ້ງຢືນ;

5. ມີເງື່ອນໄຂອື່ນ ຕາມການກຳນົດຂອງຂະແໜງການທີ່ກ່ຽວຂ້ອງ.

ສຳລັບກຸ່ມ ທີ່ມີຈຸດປະສົງສ້າງຕັ້ງເປັນສະຫະກອນ ຫາກມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ແລະ 3 ຂອງມາດຕານີ້ ໃຫ້ຍື່ນຄຳຮ້ອງຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອຂຶ້ນທະບຽນສະຫະກອນ.

ສຳລັບເງື່ອນໄຂການສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 ກົດລະບຽບຂອງສະຫະກອນ**

ກົດລະບຽບຂອງສະຫະກອນ ມີເນື້ອໃນ ດັ່ງນີ້:

1. ຊື່ສະຫະກອນ ຕ້ອງມີຄຳນຳໜ້າ ສະຫະກອນ;

2. ປະເພດສະຫະກອນ;

3. ຈຸດປະສົງ;

4. ທີ່ຕັ້ງຫ້ອງການ;

5. ມູນຄ່າຮຸ້ນ, ຈຳນວນຮຸ້ນ, ການຊຳລະຮຸ້ນດ້ວຍເງິນ ຫຼື ຊັບສິນອື່ນ, ການຂາຍ ແລະ ການໂອນຮຸ້ນ, ການຈ່າຍຄືນເງິນຮຸ້ນ ໃຫ້ແກ່ສະມາຊິກ;

6. ການດຳເນີນງານການບັນຊີ ແລະ ການເງິນຂອງສະຫະກອນ;

7. ການແບ່ງເງິນປັນຜົນ ແລະ ຄວາມຮັບຜິດຊອບຕໍ່ການຫຼຸບທຶນຂອງສະຫະກອນ;

8. ເງື່ອນໄຂການເປັນສະມາຊິກ, ສິດ ແລະ ໜ້າທີ່ ຂອງສະມາຊິກ ແລະ ການສິ້ນສຸດການເປັນສະມາຊິກ;

9. ລະບອບການປະຊຸມຂອງສະຫະກອນ;

10. ຄະນະບໍລິຫານ, ຄະນະກວດກາສະຫະກອນ, ຜູ້ຈັດການ, ໜ່ວຍງານ ແລະ ພະນັກງານຂອງສະຫະກອນ.

**ມາດຕາ 16 ກອງປະຊຸມສ້າງຕັ້ງສະຫະກອນ**

ຜູ້ມີຈຸດປະສົງສ້າງຕັ້ງສະຫະກອນ ຕ້ອງໄດ້ຈັດກອງປະຊຸມປຶກສາຫາລື ເພື່ອກະກຽມການສ້າງຕັ້ງສະຫະກອນ ຊຶ່ງມີເນື້ອໃນ ດັ່ງນີ້:

1. ສ້າງຄວາມຮັບຮູ້ ກ່ຽວກັບສະຫະກອນ ທີ່ຈະສ້າງຕັ້ງ;
2. ປຶກສາຫາລື ກ່ຽວກັບການສ້າງຕັ້ງ ເປັນຕົ້ນ ປະເພດ, ຊື່, ຈຳນວນສະມາຊິກ, ແຜນການສ້າງຕັ້ງ;
3. ພິຈາລະນາຮັບຮອງ ແຜນດຳເນີນກິດຈະການ, ກົດລະບຽບ ແລະ ເລືອກຕັ້ງຄະນະບໍລິຫານຊຸດທຳອິດຂອງສະຫະກອນ.

**ມາດຕາ 17 ການສະເໜີຂໍສ້າງຕັ້ງສະຫະກອນ**

ຜູ້ມີຈຸດປະສົງສ້າງຕັ້ງສະຫະກອນ ຕ້ອງຍື່ນຄຳຮ້ອງຂໍ ພ້ອມດ້ວຍເອກະສານປະກອບ ເພື່ອຂຶ້ນທະບຽນສະຫະກອນທຸກປະເພດນຳຂະແໜງການກະສິກຳ ແລະ ປ່າໄມ້ ແລະ ໃຫ້ຂໍອະນຸຍາດດຳເນີນກິດຈະການສະຫະກອນນຳຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 18 ເອກະສານປະກອບການຂໍສ້າງຕັ້ງສະຫະກອນ**

ເອກະສານປະກອບການຂໍສ້າງຕັ້ງສະຫະກອນ ມີ ດັ່ງນີ້:

1. ຄຳຮ້ອງຂໍສ້າງຕັ້ງສະຫະກອນ ຕາມແບບພິມ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;
2. ກົດລະບຽບຂອງສະຫະກອນ;
3. ແຜນດຳເນີນກິດຈະການຂອງສະຫະກອນ;
4. ບັນຊີລາຍຊື່ສະມາຊິກ ພ້ອມດ້ວຍລາຍເຊັນຂອງແຕ່ລະຄົນ, ຈຳນວນຮຸ້ນ ແລະ ທຶນຂອງສະຫະກອນ;
5. ໃບຢັ້ງຢືນທີ່ຕັ້ງຫ້ອງການຂອງສະຫະກອນ ຈາກຫ້ອງການບ້ານ;
6. ໃບອະນຸຍາດສ້າງຕັ້ງກຸ່ມ ໃນກໍລະນີໄດ້ສ້າງຕັ້ງເປັນກຸ່ມ ມາກ່ອນແລ້ວ.

**ມາດຕາ 19 ການພິຈາລະນາອອກໃບທະບຽນສະຫະກອນ**

ພາຍຫຼັງໄດ້ຮັບເອກະສານປະກອບການຂໍສ້າງຕັ້ງສະຫະກອນ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາອອກໃບທະບຽນສະຫະກອນ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

ໃບທະບຽນສະຫະກອນ ແມ່ນ ເອກະສານຮັບຮອງການສ້າງຕັ້ງສະຫະກອນຢ່າງຖືກຕ້ອງຕາມກົດໝາຍ ແລະ ນຳໃຊ້ໄດ້ຕະຫຼອດໄລຍະການເຄື່ອນໄຫວຂອງສະຫະກອນນັ້ນ.

**ມາດຕາ 20 ການຂໍອະນຸຍາດດຳເນີນກິດຈະການສະຫະກອນ**

ພາຍຫຼັງໄດ້ໃບທະບຽນສະຫະກອນ ຈາກຂະແໜງການກະສິກຳ ແລະ ປ່າໄມ້ແລ້ວ ຕ້ອງຂໍອະນຸຍາດດຳເນີນກິດຈະການສະຫະກອນນຳຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຂະແໜງການທີ່ກ່ຽວຂ້ອງ ຕ້ອງແຈ້ງການອອກໃບອະນຸຍາດດຳເນີນກິດຈະການສະຫະກອນ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນອອກໃບອະນຸຍາດດັ່ງກ່າວ ເປັນຕົ້ນໄປ.

ການອະນຸຍາດດຳເນີນກິດຈະການສະຫະກອນແຕ່ລະປະເພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 21 ສາຂາສະຫະກອນ**

ສະຫະກອນ ສາມາດສ້າງຕັ້ງສາຂາຂອງຕົນຂຶ້ນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ແຈ້ງໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ບ່ອນສາຂາສະຫະກອນຕັ້ງຢູ່.

ສຳລັບເງື່ອນໄຂການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງສາຂາສະຫະກອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການຈັດຕັ້ງຂອງສະຫະກອນ

**ມາດຕາ 22 ການຈັດຕັ້ງຂອງສະຫະກອນ**

ການຈັດຕັ້ງຂອງສະຫະກອນ ມີ ດັ່ງນີ້:

1. ກອງປະຊຸມຂອງສະຫະກອນ;
2. ຄະນະບໍລິຫານສະຫະກອນ;
3. ຄະນະກວດກາສະຫະກອນ;
4. ຄະນະອຳນວຍການ ຫຼື ຜູ້ຈັດການສະຫະກອນ;
5. ໜ່ວຍງານຂອງສະຫະກອນ.

**ມາດຕາ 23 ກອງປະຊຸມຂອງສະຫະກອນ**

ກອງປະຊຸມຂອງສະຫະກອນ ແມ່ນ ການຈັດຕັ້ງສູງສຸດຂອງສະຫະກອນ ຊຶ່ງປະກອບດ້ວຍ:

1. ກອງປະຊຸມສາມັນ ເປີດຂຶ້ນຢ່າງໜ້ອຍປີລະຄັ້ງ;

2. ກອງປະຊຸມວິສາມັນ ເປີດຂຶ້ນເມື່ອໃດກໍໄດ້ ຕາມການເຊີນຂອງ ປະທານຄະນະບໍລິຫານສະຫະກອນ ຫຼື ຕາມການສະເໜີຂອງສະມາຊິກ ທີ່ມີຈຳນວນ ໜຶ່ງສ່ວນສີ່ ຂອງສະມາຊິກທັງໝົດ ເພື່ອພິຈາລະນາບັນຫາສຳຄັນ, ຈຳເປັນ ແລະ ຮີບດ່ວນ.

ກອງປະຊຸມຂອງສະຫະກອນ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີສະມາຊິກເຂົ້າຮ່ວມແຕ່ ສອງສ່ວນສາມ ຂຶ້ນໄປຂອງຈຳນວນສະມາຊິກທັງໝົດ.

ກອງປະຊຸມສາມັນຂອງສະຫະກອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາກົດລະບຽບຂອງສະຫະກອນ, ແຜນດຳເນີນກິດຈະການ ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ ຂອງສະຫະກອນ;
2. ຮັບຮອງບົດສະຫຼຸບລາຍງານການບັນຊີ, ການເງິນ ແລະ ບົດລາຍງານຜົນການກວດສອບ;
3. ພິຈາລະນາຕົກລົງກ່ຽວກັບການເພີ່ມ, ຫຼຸດຈຳນວນຮຸ້ນ ຫຼື ມູນຄ່າຮຸ້ນ ແລະ ການແບ່ງເງິນປັນຜົນ;
4. ເລືອກຕັ້ງ ຫຼື ປົດຕຳແໜ່ງ ຄະນະບໍລິຫານ ແລະ ຄະນະກວດກາ ສະຫະກອນ;
5. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຄະນະອຳນວຍການ ຫຼື ຜູ້ຈັດການ ສະຫະກອນ;
6. ພິຈາລະນາຕົກລົງກ່ຽວກັບເບ້ຍປະຊຸມ, ເງິນອຸດໜູນ ແລະ ນະໂຍບາຍອື່ນ ໃຫ້ແກ່ຄະນະບໍລິຫານ ແລະ ຄະນະກວດກາ ສະຫະກອນ;

7. ພິຈາລະນາຕົກລົງ ກ່ຽວກັບເງິນເດືອນ, ເງິນອຸດໜູນ ແລະ ນະໂຍບາຍອື່ນ ໃຫ້ແກ່ຄະນະອຳນວຍການ ຫຼື ຜູ້ຈັດການ ແລະ ພະນັກງານ ຂອງສະຫະກອນ;

8. ຕົກລົງບັນຫາອື່ນທີ່ສຳຄັນຂອງສະຫະກອນ.

ການພິຈາລະນາຕົກລົງບັນຫາໃດໜຶ່ງໃນກອງປະຊຸມຂອງສະຫະກອນ ຕ້ອງໄດ້ຮັບຄະແນນສຽງເຫັນດີ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະຫະກອນທີ່ເຂົ້າຮ່ວມ, ຍົກເວັ້ນ ການຮັບຮອງເອົາກົດລະບຽບ, ການ ຄວບ, ການແຍກ, ການຍຸບເລີກ ສະຫະກອນ ຕ້ອງໄດ້ຮັບຄະແນນສຽງເຫັນດີຫຼາຍກວ່າສອງສ່ວນສາມ.

### ມາດຕາ 24 ຄະນະບໍລິຫານສະຫະກອນ

ຄະນະບໍລິຫານສະຫະກອນ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມຂອງສະຫະກອນ ຊຶ່ງປະກອບ ດ້ວຍ ສະມາຊິກແຕ່ ສາມຄົນຂຶ້ນໄປ ໃນນັ້ນມີ ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ.

ຄະນະບໍລິຫານສະຫະກອນ ມີອາຍຸການ ຫ້າປີ ແລະ ໃຫ້ດຳເນີນການເລືອກຕັ້ງຄະນະບໍລິຫານຊຸດໃໝ່. ໃນກໍລະນີກຳມະການຄະນະບໍລິຫານໃດໜຶ່ງວ່າງລົງ ສະຫະກອນ ຕ້ອງເປີດກອງປະຊຸມເລືອກຕັ້ງກຳມະການຄະນະ ບໍລິຫານໃໝ່ໃສ່ຕຳແໜ່ງທີ່ວ່າງລົງນັ້ນ ເພື່ອປະຕິບັດໜ້າທີ່ຕາມໄລຍະເວລາ ຂອງອາຍຸການຂອງຄະນະບໍລິຫານທີ່ຍັງ ເຫຼືອ.

ຄະນະບໍລິຫານສະຫະກອນ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຢ່າງໜ້ອຍ ສາມເດືອນ ຕໍ່ຄັ້ງ.

ຄະນະບໍລິຫານສະຫະກອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍມະຕິກອງປະຊຸມຂອງສະຫະກອນ;
2. ສະເໜີແຜນດຳເນີນກິດຈະການ ແລະ ການເຄື່ອນໄຫວປະຈຳປີຕໍ່ ກອງປະຊຸມຂອງສະຫະກອນ;
3. ຊຸກຍູ້ ແລະ ຕິດຕາມ ກວດກາ ການເຄື່ອນໄຫວຂອງ ຄະນະກວດກາ, ຄະນະອຳນວຍການ ຫຼື ຜູ້ຈັດ ການ;
4. ຮັບຮອງເອົາລະບຽບການກ່ຽວກັບການຄຸ້ມຄອງ ແລະ ບໍລິຫານສະຫະກອນ ຕາມການສະເໜີ ຂອງຜູ້ຈັດການ;
5. ເລືອກຕັ້ງປະທານ, ຮອງປະທານ ແລະ ກຳມະການຂອງຄະນະບໍລິຫານ ພ້ອມທັງແບ່ງຄວາມຮັບຜິດ ຊອບໃຫ້ແຕ່ລະຄົນ;
6. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຄະນະອຳນວຍການ ຫຼື ຜູ້ຈັດການ ສະຫະກອນ;
7. ອະນຸມັດການຈ້າງ ຫຼື ຍົກເລີກການວ່າຈ້າງພະນັກງານຂອງສະຫະກອນ;
8. ພິຈາລະນາຮັບສະມາຊິກໃໝ່ ແລະ ການລາອອກຂອງສະມາຊິກ ບົນພື້ນຖານການເຫັນດີຂອງ ສະມາຊິກ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 25 ຄະນະກວດກາສະຫະກອນ

ຄະນະກວດກາສະຫະກອນ ປະກອບດ້ວຍສະມາຊິກແຕ່ ສາມຄົນຂຶ້ນໄປ ໃນນັ້ນ ມີປະທານກວດກາ, ຮອງປະທານກວດກາ ແລະ ກຳມະການຈຳນວນໜຶ່ງ ຊຶ່ງບໍ່ຢູ່ໃນຄະນະບໍລິຫານສະຫະກອນ ແລະ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມຂອງສະຫະກອນ.

ຄະນະກວດກາສະຫະກອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງລະບຽບການ ກ່ຽວກັບການກວດກາ ແລະ ການລາຍງານ ຂອງສະຫະກອນ;

2. ກວດກາການເຄື່ອນໄຫວວຽກງານຂອງສະຫະກອນ ເປັນຕົ້ນ ການເງິນ, ການບັນຊີ, ການນຳໃຊ້ທຶນ ແລະ ຊັບສິນ ຂອງສະຫະກອນ;

3. ເຂົ້າຮ່ວມກອງປະຊຸມຂອງຄະນະບໍລິຫານ ແລະ ກອງປະຊຸມ ຂອງສະຫະກອນ;

4. ທວງໃຫ້ຜູ້ທີ່ກ່ຽວຂ້ອງໃນສະຫະກອນສະໜອງ ເອກະສານ, ຂໍ້ມູນຕ່າງໆທີ່ຕ້ອງການ ເພື່ອຮັບໃຊ້ວຽກງານກວດກາ ພ້ອມທັງຮັກສາຂໍ້ມູນດັ່ງກ່າວໃຫ້ເປັນຄວາມລັບ;

5. ລາຍງານກ່ຽວກັບການລະເມີດກົດໝາຍ, ກົດລະບຽບຂອງສະຫະກອນຕໍ່ ຄະນະບໍລິຫານສະຫະກອນ ແລະ ກອງປະຊຸມຂອງສະຫະກອນ ພ້ອມທັງສະເໜີມາດຕະການ ແລະ ວິທີການແກ້ໄຂ;

6. ສະເໜີກອງປະຊຸມຂອງສະຫະກອນ ພິຈາລະນາຈ້າງຜູ້ກວດສອບບັນຊີອິດສະລະ ເພື່ອກວດສອບບັນຊີຂອງສະຫະກອນ ໃນກໍລະນີຈຳເປັນ;

7. ລາຍງານຜົນການກວດກາຕໍ່ກອງປະຊຸມຄະນະບໍລິຫານ ແລະ ກອງປະຊຸມຂອງສະຫະກອນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 26 ຄະນະອຳນວຍການ ຫຼື ຜູ້ຈັດການສະຫະກອນ**

ສະຫະກອນ ອາດມີ ຄະນະອຳນວຍການ ຫຼື ຜູ້ຈັດການ ເປັນຜູ້ບໍລິຫານວຽກງານປະຈຳວັນຂອງສະຫະກອນ ຕາມເງື່ອນໄຂ ແລະ ຈຸດພິເສດຂອງແຕ່ລະສະຫະກອນ.

ຄະນະອຳນວຍການ ຫຼື ຜູ້ຈັດການສະຫະກອນ ເປັນຜູ້ບໍລິຫານຈັດການວຽກງານປະຈຳວັນໃນຂອບເຂດສິດ ແລະ ໜ້າທີ່ ຂອງຕົນຕາມກົດໝາຍ, ກົດລະບຽບຂອງສະຫະກອນ ແລະ ຕາມການມອບໝາຍຂອງຄະນະບໍລິຫານສະຫະກອນ.

ຄະນະອຳນວຍການ ຫຼື ຜູ້ຈັດການສະຫະກອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ບໍລິຫານວຽກງານປະຈຳວັນ ແລະ ຮັບຜິດຊອບຕໍ່ຜົນການດຳເນີນກິດຈະການຂອງສະຫະກອນ;

2. ສ້າງ ຫຼື ດັດແກ້ແຜນດຳເນີນກິດຈະການ ແລະ ແຜນການເຄື່ອນໄຫວປະຈຳປີ ແລ້ວສະເໜີຄະນະບໍລິຫານສະຫະກອນ;

3. ຄຸ້ມຄອງການນຳໃຊ້ທຶນ ແລະ ຊັບສິນ ຂອງສະຫະກອນ;

4. ເຂົ້າຮ່ວມກອງປະຊຸມຂອງສະຫະກອນ, ກອງປະຊຸມຄະນະບໍລິຫານ ຫຼື ກອງປະຊຸມອື່ນທີ່ກ່ຽວຂ້ອງກັບວຽກງານສະຫະກອນ;

5. ສະໜອງຂໍ້ມູນ ແລະ ໃຫ້ຄຳຊີ້ແຈງບັນຫາຕ່າງໆ ທີ່ຄະນະກວດກາ, ຄະນະບໍລິຫານ ສະຫະກອນ ແລະ ກອງປະຊຸມຂອງສະຫະກອນມີຄວາມສົນໃຈ;

6. ບັນຈຸ, ສັບຊ້ອນພະນັກງານຂອງສະຫະກອນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ສະເໜີຈ້າງ ຫຼື ເລີກຈ້າງ ພະນັກງານຂອງສະຫະກອນ ຕໍ່ຄະນະບໍລິຫານສະຫະກອນ ເພື່ອພິຈາລະນາອະນຸມັດ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວການດຳເນີນກິດຈະການ ຕໍ່ຄະນະບໍລິຫານສະຫະກອນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 27 ໜ່ວຍງານຂອງສະຫະກອນ**

ສະຫະກອນ ມີໜ່ວຍງານທີ່ຮັບຜິດຊອບວຽກງານ ການເງິນ, ການບັນຊີ ແລະ ໜ່ວຍງານອື່ນ ຕາມຄວາມຈຳເປັນ, ເໝາະສົມກັບຂະໜາດ ແລະ ຈຸດພິເສດຂອງສະຫະກອນ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວ ລວມທັງຄວາມຮັບຜິດຊອບຂອງແຕ່ລະໜ່ວຍງານ ໄດ້ກຳນົດໄວ້ໃນກົດລະບຽບຂອງສະຫະກອນ.

## ໝວດທີ 3
## ສິດ ແລະ ພັນທະ ຂອງສະຫະກອນ

**ມາດຕາ 28 ສິດຂອງສະຫະກອນ**

ສະຫະກອນ ມີສິດ ດັ່ງນີ້:

1. ສົ່ງເສີມສະມາຊິກດຳເນີນ ການຜະລິດ, ການຄ້າ, ການບໍລິການ ແລະ ກິດຈະການອື່ນ ຕາມທີ່ໄດ້ຮັບອະນຸຍາດ;
2. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຈັດກອງປະຊຸມ ເພື່ອປຶກສາຫາລືບັນຫາຕ່າງໆ ຕາມແຜນການຂອງສະຫະກອນ;
3. ຮັບສະມາຊິກຢ່າງເປີດກວ້າງບົນພື້ນຖານຄວາມສະໝັກໃຈ;
4. ຍາດແຍ່ງການຊ່ວຍເຫຼືອ ດ້ານເຕັກນິກ, ວິຊາການ ແລະ ທຶນ ຈາກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
5. ກູ້ຢືມເງິນນຳທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ເພື່ອມາລົງທຶນໃນກິດຈະການຂອງຕົນ;
6. ໃຫ້ກູ້ຢືມເງິນ, ໃຫ້ການບໍລິການ ອຸປະກອນ ແລະ ພາຫະນະການຜະລິດ ແກ່ສະມາຊິກ;
7. ສ້າງ, ຄຸ້ມຄອງ ແລະ ປະຕິບັດ ນະໂຍບາຍສະຫວັດດີການ ແກ່ສະມາຊິກ, ຄອບຄົວ ແລະ ສັງຄົມ ໃຫ້ຖືກຕ້ອງ ແລະ ເປັນທຳ;
8. ເຂົ້າຮ່ວມການວາງສະແດງ ແລະ ຈຳໜ່າຍສິນຄ້າຂອງສະຫະກອນ;
9. ຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງສະຫະກອນ;
10. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 29 ພັນທະຂອງສະຫະກອນ**

ສະຫະກອນ ມີພັນທະ ດັ່ງນີ້:

1. ປະຕິບັດຕາມກົດລະບຽບຂອງສະຫະກອນ ແລະ ເຕົ້າໂຮມຄວາມສາມັກຄີຂອງສະມາຊິກພາຍໃນ;
2. ໃຫ້ການຊ່ວຍເຫຼືອ ແລະ ປົກປ້ອງຜົນປະໂຫຍດອັນຊອບທຳຂອງບັນດາສະມາຊິກ;
3. ໄກ່ເກ່ຍຂໍ້ຂັດແຍ່ງລະຫວ່າງສະມາຊິກດ້ວຍກັນ;
4. ຊ່ວຍເຫຼືອດ້ານເຕັກນິກ, ວິຊາການ ແລະ ສະໜອງ ຂໍ້ມູນ ຂ່າວສານ ກ່ຽວກັບການຜະລິດ, ການຄ້າ, ການຕະຫຼາດ ແລະ ການບໍລິການໃຫ້ແກ່ສະມາຊິກ;
5. ເຂົ້າຮ່ວມປຶກສາຫາລື ແລະ ປະກອບຄຳເຫັນຕໍ່ບັນຫາທີ່ພົວພັນກັບການດຳເນີນກິດຈະການຂອງສະຫະກອນ;
6. ແຈ້ງຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ, ຂະແໜງການກະສິກຳ ແລະ ປ່າໄມ້ ກ່ຽວກັບການເພີ່ມ ຫຼື ຫຼຸດ ສະມາຊິກ, ທຶນ, ການຖືຮຸ້ນ ແລະ ການປ່ຽນແປງເນື້ອໃນທີ່ສຳຄັນ;
7. ຮັບຜິດຊອບຕໍ່ໜີ້ສິນຂອງສະຫະກອນ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງສະຫະກອນຕໍ່ຂະແໜງການທີ່ກ່ຽວຂ້ອງຢ່າງເປັນປົກກະຕິ;

9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ສະມາຊິກສະຫະກອນ

### ມາດຕາ 30 ເງື່ອນໄຂການເປັນສະມາຊິກສະຫະກອນ

ການເປັນສະມາຊິກສະຫະກອນ ມີເງື່ອນໄຂ ດັ່ງນີ້:

1. ສະໝັກໃຈ ແລະ ຖືຮຸ້ນຢ່າງໜ້ອຍ ໜຶ່ງຮຸ້ນ;
2. ບໍ່ແມ່ນນິຕິບຸກຄົນ;
3. ເປັນພົນລະເມືອງລາວມີອາຍຸ ສິບແປດປີ ຂຶ້ນໄປ ແລະ ບໍ່ເປັນຄົນບ້າເສຍຈິດ;
4. ບໍ່ມີໜີ້ສິນຫຼາຍກວ່າຊັບສິນ;
5. ມີເງື່ອນໄຂອື່ນ ຕາມກົດລະບຽບຂອງສະຫະກອນ.

### ມາດຕາ 31 ສິດ ແລະ ພັນທະຂອງສະມາຊິກສະຫະກອນ

ສະມາຊິກສະຫະກອນ ມີສິດ ດັ່ງນີ້:

1. ເຂົ້າຮ່ວມໃນການດຳເນີນກິດຈະການ ທີ່ກ່ຽວຂ້ອງຂອງສະຫະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະຫະກອນ;
2. ໄດ້ຮັບການແບ່ງເງິນປັນຜົນ ຫຼື ຜົນປະໂຫຍດອື່ນ ຕາມອັດຕາສ່ວນຮຸ້ນທີ່ຕົນຖື;
3. ໄດ້ຮັບການຊ່ວຍເຫຼືອ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຕົນ;
4. ສະໝັກຮັບເລືອກຕັ້ງເປັນ ຄະນະບໍລິຫານ ແລະ ຄະນະກວດກາ ສະຫະກອນ;
5. ສະເໜີຄະນະບໍລິຫານຂອງສະຫະກອນ ເພື່ອເປີດກອງປະຊຸມວິສາມັນ;
6. ສະເໜີຂະແໜງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂບັນຫາໃດໜຶ່ງ ໃນກໍລະນີສະຫະກອນບໍ່ແກ້ໄຂ ຫຼື ບໍ່ສາມາດແກ້ໄຂໄດ້;
7. ລາອອກຈາກການເປັນສະມາຊິກ ໂດຍຮູບການ ຂາຍ, ມອບ, ໂອນ ຮຸ້ນ ຂອງຕົນທັງໝົດ;
8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ກົດລະບຽບຂອງສະຫະກອນ.

ສະມາຊິກສະຫະກອນ ມີພັນທະ ດັ່ງນີ້:

1. ເຂົ້າຮ່ວມກອງປະຊຸມ, ລົງຄະແນນສຽງ, ສະເໜີ ແລະ ປະກອບຄຳຄິດຄຳເຫັນດ້ານຕ່າງໆ ລວມທັງບັນຫາກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ;
2. ຮັກສາຄວາມສາມັກຄີລະຫວ່າງສະມາຊິກດ້ວຍກັນ, ຮັກສາກຽດສັກສີ, ຄວາມລັບດ້ານທຸລະກິດ ແລະ ຜົນປະໂຫຍດ ຂອງສະຫະກອນ;
3. ຮັບຜິດຊອບຕໍ່ໜີ້ສິນຂອງສະຫະກອນ ເທົ່າກັບຈຳນວນຮຸ້ນທີ່ຍັງບໍ່ທັນໄດ້ຖອກເຕັມ;
4. ກວດກາຊັບສິນ ແລະ ບັນຊີການເງິນຂອງສະຫະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະຫະກອນ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ກົດລະບຽບຂອງສະຫະກອນ.

## ໝວດທີ 5
## ທຶນສະຫະກອນ

### ມາດຕາ 32 ທຶນສະຫະກອນ

ທຶນສະຫະກອນ ແມ່ນ ຊັບສິນທີ່ນຳໃຊ້ເຂົ້າໃນການດຳເນີນກິດຈະການສະຫະກອນ ຊຶ່ງປະກອບດ້ວຍ ເງິນ ແລະ ວັດຖຸ.

ທຶນສະຫະກອນ ໄດ້ມາຈາກ:

1. ການປະກອບຂອງບັນດາສະມາຊິກ;
2. ການດຳເນີນກິດຈະການຂອງສະຫະກອນ;
3. ການກູ້ຢືມ ຫຼື ການຊ່ວຍເຫຼືອ ຈາກພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບທີ່ຖືກຕ້ອງຕາມກົດໝາຍ.

### ມາດຕາ 33 ການປະກອບທຶນຂອງສະມາຊິກ

ສະມາຊິກສະຫະກອນ ຕ້ອງປະກອບທຶນ ຢ່າງໜ້ອຍ ໜຶ່ງຮຸ້ນ ໃນເວລາເຂົ້າເປັນສະມາຊິກ ແລະ ສາມາດ ປະກອບທຶນເພີ່ມ ຕາມການຕົກລົງໃນກອງປະຊຸມຂອງສະຫະກອນ ແຕ່ສູງສຸດບໍ່ໃຫ້ເກີນ ຊາວສ່ວນຮ້ອຍ ຂອງ ຈຳນວນຮຸ້ນທັງໝົດຂອງສະຫະກອນ.

### ມາດຕາ 34 ການແບ່ງເງິນປັນຜົນ

ກຳໄລສຸດທິຂອງສະຫະກອນ ພາຍຫຼັງໄດ້ຫັກເຂົ້າຄັງ ຕາມກົດລະບຽບຂອງສະຫະກອນແລ້ວ ໃຫ້ແບ່ງ ເງິນປັນຜົນ ແກ່ສະມາຊິກ ຕາມອັດຕາສ່ວນຮຸ້ນ ທີ່ສະມາຊິກແຕ່ລະຄົນຖືຮຸ້ນ.

ກອງປະຊຸມຂອງສະຫະກອນ ເປັນຜູ້ຕົກລົງກ່ຽວກັບການແບ່ງເງິນປັນຜົນ.

### ມາດຕາ 35 ຜົນປະໂຫຍດຈາກການດຳເນີນກິດຈະການຮ່ວມ

ຜົນປະໂຫຍດຈາກການດຳເນີນກິດຈະການຮ່ວມ ແມ່ນ ຜົນປະໂຫຍດທີ່ໄດ້ມາຈາກການປະກອບສ່ວນ ຂອງສະມາຊິກ ໃນການດຳເນີນກິດຈະການສະຫະກອນ ຊຶ່ງຜົນປະໂຫຍດດັ່ງກ່າວ ອາດຈະແບ່ງກັນ ຫຼື ນຳໃຊ້ ຕາມການຕົກລົງລະຫວ່າງສະຫະກອນ ແລະ ສະມາຊິກ ເປັນຕົ້ນ ການນຳເອົາຜົນຜະລິດຂອງຕົນໄປໃຫ້ສະຫະກອນ ຂາຍ ໃນນາມສະຫະກອນ ຫຼື ການນຳສິນຄ້າຂອງສະຫະກອນ ອອກໄປຂາຍ.

### ມາດຕາ 36 ຄັງສຳຮອງ ແລະ ຄັງສະສົມ

ຄັງສຳຮອງ ແມ່ນ ຄັງເງິນທີ່ສ້າງຂຶ້ນ ເພື່ອທົດແທນການຂາດທຶນຈາກການດຳເນີນກິດຈະການສະຫະກອນ ຊຶ່ງຫັກຈາກກຳໄລສຸດທິຂອງທຸກປີ ຢ່າງໜ້ອຍ ຫ້າສ່ວນຮ້ອຍ ຕາມການຕົກລົງໃນກອງປະຊຸມສະຫະກອນ. ເມື່ອຄັງສຳຮອງມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນ ທີ່ຂຶ້ນທະບຽນສະຫະກອນແລ້ວ ສາມາດໂຈະການຫັກເງິນເຂົ້າ ຄັງສຳຮອງດັ່ງກ່າວ.

ຄັງສະສົມ ແມ່ນ ຄັງເງິນທີ່ສ້າງຂຶ້ນ ເພື່ອສະສົມທຶນໄວ້ ນຳໃຊ້ເຂົ້າໃນການຂະຫຍາຍກິດຈະການ, ການກໍ່ ສ້າງໂຄງລ່າງພື້ນຖານ, ການປະກອບວັດຖຸເຕັກນິກ ແລະ ການລົງທຶນ ລວມທັງການຊື້ຮຸ້ນຄືນຈາກສະມາຊິກ ໃນເວລາມີການຂໍລາອອກ ໂດຍຫັກຈາກກຳໄລສຸດທິຂອງທຸກປີຢ່າງໜ້ອຍ ສິບສ່ວນຮ້ອຍ ຕາມການຕົກລົງໃນ ກອງປະຊຸມຂອງສະຫະກອນ.

**ມາດຕາ 37 ການຖືບັນຊີ**

ສະຫະກອນ ຕ້ອງຖືບັນຊີ ແລະ ປະຕິບັດຕາມລະບົບ, ມາດຕະຖານການບັນຊີ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ.

**ມາດຕາ 38 ການກວດສອບ**

ສະຫະກອນ ສາມາດຈ້າງຜູ້ກວດສອບອິດສະລະ ເພື່ອດຳເນີນການກວດສອບເອກະສານລາຍງານການເງິນ ຕາມການຕົກລົງໃນກອງປະຊຸມຂອງສະຫະກອນ ຫຼື ຕາມການສະເໜີຂອງຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ ໃນກໍລະນີຈຳເປັນ.

## ໝວດທີ 6

## ການຄວບ, ການແຍກ ແລະ ການຍຸບເລີກສະຫະກອນ

**ມາດຕາ 39 ການຄວບສະຫະກອນ**

ສະຫະກອນໜຶ່ງ ສາມາດຄວບກັບອີກສະຫະກອນໜຶ່ງ ຫຼື ຫຼາຍສະຫະກອນ ເພື່ອກາຍເປັນສະຫະກອນໃດໜຶ່ງ ຫຼື ສ້າງເປັນສະຫະກອນໃໝ່ ແຕ່ຕ້ອງມີມະຕິເຫັນດີຈາກກອງປະຊຸມຂອງສະຫະກອນ ແລະ ບໍ່ມີການຄັດຄ້ານຈາກເຈົ້າໜີ້ ຖ້າຫາກມີ.

ການຄວບ ເພື່ອກາຍເປັນສະຫະກອນໃດໜຶ່ງ ຕ້ອງແຈ້ງໃຫ້ຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ, ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການການເງິນ. ສ່ວນການຄວບ ເພື່ອສ້າງຕັ້ງເປັນສະຫະກອນໃໝ່ ຕ້ອງດຳເນີນການສ້າງຕັ້ງ ຕາມກົດໝາຍສະບັບນີ້.

ການຄວບບໍ່ວ່າໃນກໍລະນີໃດກໍຕາມ ຈະບໍ່ເຮັດໃຫ້ຄວາມຮັບຜິດຊອບຂອງແຕ່ລະສະຫະກອນ ຕົກໄປ.

**ມາດຕາ 40 ການແຍກສະຫະກອນ**

ສະຫະກອນໜຶ່ງ ສາມາດແຍກອອກເປັນສອງສະຫະກອນ ຫຼື ຫຼາຍສະຫະກອນໄດ້ ແຕ່ຕ້ອງມີມະຕິເຫັນດີຈາກກອງປະຊຸມຂອງສະຫະກອນ ແລະ ບໍ່ມີການຄັດຄ້ານຈາກເຈົ້າໜີ້ ຖ້າຫາກມີ.

ການແຍກສະຫະກອນ ຕ້ອງແຈ້ງໃຫ້ຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ, ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການການເງິນ ສຳລັບສະຫະກອນເກົ່າທີ່ຍັງຄົງຕົວຢູ່, ສ່ວນການແຍກເປັນສະຫະກອນໃໝ່ ຕ້ອງດຳເນີນການສ້າງຕັ້ງ ຕາມກົດໝາຍສະບັບນີ້.

ການແຍກສະຫະກອນ ຕ້ອງກຳນົດແຈ້ງກ່ຽວກັບຊັບສິນ ແລະ ຄວາມຮັບຜິດຊອບ ຫຼື ພັນທະຂອງສະຫະກອນເກົ່າທີ່ຕົກລົງແຍກນັ້ນ.

**ມາດຕາ 41 ການຍຸບເລີກສະຫະກອນ**

ສະຫະກອນ ຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີຄວາມສະໝັກໃຈ ບົນພື້ນຖານມະຕິກອງປະຊຸມຂອງສະຫະກອນ;
2. ບໍ່ມີການເຄື່ອນໄຫວ ພາຍໃນເວລາ ໜຶ່ງປີ ນັບແຕ່ວັນໄດ້ຮັບອະນຸຍາດ ຫຼື ບໍ່ດຳເນີນກິດຈະການຕາມທີ່ໄດ້ຮັບອະນຸຍາດ ພາຍຫຼັງໄດ້ຮັບການແຈ້ງເຕືອນ;
3. ຖືກຖອນໃບອະນຸຍາດດຳເນີນກິດຈະການສະຫະກອນ ຫຼື ໃບທະບຽນສະຫະກອນ;

4. ມີການຕັດສິນຂອງສານ ໃຫ້ຍຸບເລີກ ຫຼື ລົ້ມລະລາຍ;

5. ຍຸບເລີກຕາມເຫດຜົນໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະຫະກອນ.

ສະຫະກອນທີ່ຍຸບເລີກ ຕ້ອງມີການຊຳລະສະສາງຊັບສິນ ແລະ ໜີ້ສິນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການຍຸບເລີກສະຫະກອນ ຕ້ອງແຈ້ງໃຫ້ກະຊວງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນ ລັດຖະການ.

## ພາກທີ IV
## ນະໂຍບາຍສົ່ງເສີມສະຫະກອນ

### ມາດຕາ 42 ນະໂຍບາຍສົ່ງເສີມສະຫະກອນ

ນະໂຍບາຍສົ່ງເສີມສະຫະກອນ ມີ ດັ່ງນີ້:

1. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ;
2. ການນຳໃຊ້ທີ່ດິນຂອງລັດ;
3. ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ;
4. ການເຂົ້າເຖິງແຫຼ່ງທຶນ;
5. ນະໂຍບາຍດ້ານ ພາສີ ແລະ ອາກອນ;
6. ການບໍລິການດ້ານວິຊາການ ແລະ ໃຫ້ຄຳປຶກສາ;
7. ການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ;
8. ການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດ;
9. ການນຳໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ;
10. ການສະໜອງ ແລະ ການເຂົ້າເຖິງ ຂໍ້ມູນ ຂ່າວສານ;
11. ການສ້າງປະຖົມປັດໄຈໃນການດຳເນີນກິດຈະການ;
12. ນະໂຍບາຍອື່ນ ທີ່ລັດກຳນົດໃນແຕ່ລະໄລຍະ.

### ມາດຕາ 43 ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນເຈົ້າການເອົາໃຈໃສ່ຕໍ່ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສະຫະກອນ ດ້ວຍການສ້າງ ແລະ ປັບປຸງລະບຽບການໃຫ້ມີຄວາມຈະແຈ້ງ ແລະ ຮັດກຸມ, ກຳນົດວິທີການແກ້ໄຂບັນຫາທີ່ເປັນການກີດໜ່ວງ ແລະ ຕ້ອງເພີ່ມທະວີການບໍລິຫານ ແລະ ການບໍລິການຂອງຕົນ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ໂປ່ງໃສ.

### ມາດຕາ 44 ການນຳໃຊ້ທີ່ດິນຂອງລັດ

ຂະແໜງການ ແລະ ອົງການທີ່ກ່ຽວຂ້ອງ ເປັນເຈົ້າການປະສານສົມທົບກັບອົງການປົກຄອງທ້ອງຖິ່ນໃນການຄົ້ນຄວ້າ ແລະ ຈັດສັນທີ່ດິນຂອງລັດ ທີ່ກຳນົດເປັນເຂດຜະລິດ, ເຂດອະນຸລັກ ໃຫ້ແກ່ສະຫະກອນປົກປັກຮັກສາ ແລະ ນຳໃຊ້ເຂົ້າໃນການເຄື່ອນໄຫວຂອງສະຫະກອນ ແຕ່ບໍ່ໃຫ້ປ່ຽນເປົ້າໝາຍການນຳໃຊ້ທີ່ດິນ

ເປັນຕົ້ນ ການສ້າງຕັ້ງຫ້ອງການ, ເຂດບໍລິການ, ປຸງແຕ່ງ ໂດຍສອດຄ່ອງກັບແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ ແລະ ກົດໝາຍ.

ສໍາລັບສະຫະກອນກະສິກໍາ ແລະ ປ່າໄມ້ ຍັງຈະໄດ້ຮັບນະໂຍບາຍໃຫ້ນໍາໃຊ້ທີ່ດິນລວມຂອງບ້ານ ເພື່ອທໍາການຜະລິດກະສິກໍາ ແລະ ປ່າໄມ້.

ພາຍຫຼັງສິ້ນສຸດການນໍາໃຊ້ແລ້ວ ຕ້ອງສົ່ງທີ່ດິນດັ່ງກ່າວຄືນໃຫ້ລັດ.

**ມາດຕາ 45 ການສະໜອງໂຄງລ່າງພື້ນຖານທີ່ຈໍາເປັນ**

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນເຈົ້າການ ບູລະນະຮັກສາ, ຄົ້ນຄວ້າ ສ້າງ, ສະໜອງ ໂຄງລ່າງພື້ນຖານທີ່ຈໍາເປັນຕາມແຜນພັດທະນາເສດຖະກິດ-ສັງຄົມ ເພື່ອສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ແກ່ສະຫະກອນ ສາມາດນໍາໃຊ້ເຂົ້າໃນການດໍາເນີນທຸລະກິດ, ການຜະລິດ ເປັນຕົ້ນ ເສັ້ນທາງຄົມມະນາຄົມ, ຊົນລະປະທານ, ຕາໜ່າງໄຟຟ້າ, ການໂທລະຄົມມະນາຄົມ.

**ມາດຕາ 46 ການເຂົ້າເຖິງແຫຼ່ງທຶນ**

ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າຊອກຫາແຫຼ່ງທຶນ ຫຼື ສ້າງເງື່ອນໄຂເອື້ອອໍານວຍ ໃຫ້ແກ່ສະຫະກອນ ສາມາດເຂົ້າເຖິງແຫຼ່ງທຶນ.

ທະນາຄານແຫ່ງ ສປປ ລາວ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ສ້າງກົນໄກ, ປັບປຸງໂຄງສ້າງດ້ານສິນເຊື່ອ ແລະ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດ ໃນການສະໜອງສິນເຊື່ອ, ການຄໍ້າປະກັນສິນເຊື່ອ ແລະ ການເຊົ່າສິນເຊື່ອ ເພື່ອຮັບປະກັນໃຫ້ສະຫະກອນ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງທົ່ວເຖິງ.

**ມາດຕາ 47 ນະໂຍບາຍດ້ານ ພາສີ ແລະ ອາກອນ**

ລັດ ໃຫ້ນະໂຍບາຍສົ່ງເສີມສະຫະກອນດ້ານ ພາສີ ແລະ ອາກອນ ດັ່ງນີ້:

1. ໄດ້ຮັບນະໂຍບາຍຍົກເວັ້ນ ຄ່າທໍານຽມ ແລະ ຄ່າບໍລິການ ອອກໃບທະບຽນສະຫະກອນ ແລະ ໃບອະນຸຍາດດໍາເນີນກິດຈະການສະຫະກອນ, ສ່ວນການຕໍ່ໃບອະນຸຍາດດໍາເນີນກິດຈະການສະຫະກອນໃຫ້ເສຍຄ່າທໍານຽມ ແລະ ຄ່າບໍລິການ ຕາມລະບຽບການ;
2. ໄດ້ຮັບນະໂຍບາຍຍົກເວັ້ນອາກອນກໍາໄລຈາກການດໍາເນີນກິດຈະການ ໃນໄລຍະ ສິບປີ ສໍາລັບສະຫະກອນກະສິກໍາ ແລະ ປ່າໄມ້ ແລະ ສະຫະກອນຫັດຖະກໍາ ແລະ ປຸງແຕ່ງ, ສາມປີ ສໍາລັບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ສະຫະກອນການຄ້າ ແລະ ສະຫະກອນບໍລິການ. ພາຍຫຼັງສິ້ນສຸດໄລຍະການຍົກເວັ້ນ ຈະໄດ້ເສຍອາກອນກໍາໄລ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອາກອນລາຍໄດ້;
3. ໄດ້ຮັບນະໂຍບາຍຍົກເວັ້ນອາກອນລາຍໄດ້ຈາກເງິນປັນຜົນຂອງສະມາຊິກສະຫະກອນ;
4. ໄດ້ຮັບນະໂຍບາຍຍົກເວັ້ນ ພາສີ ແລະ ອາກອນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 48 ການບໍລິການດ້ານວິຊາການ ແລະ ໃຫ້ຄໍາປຶກສາ**

ຂະແໜງການທີ່ອະນຸຍາດດໍາເນີນກິດຈະການສະຫະກອນ ເປັນເຈົ້າການໃນການບໍລິການດ້ານວິຊາການ ແລະ ໃຫ້ຄໍາປຶກສາແກ່ສະຫະກອນ ດ້ວຍການສ້າງຕັ້ງໜ່ວຍງານ ເພື່ອເຄື່ອນໄຫວໃຫ້ບໍລິການດ້ານວິຊາການ ແລະ ໃຫ້ຄໍາປຶກສາ ແນໃສ່ພັດທະນາສະຫະກອນໃຫ້ເຕີບໃຫຍ່ ແລະ ເຂັ້ມແຂງ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂ ແລະ ກົນໄກໃນການໃຫ້ການບໍລິການດ້ານວິຊາການ ແລະ ໃຫ້ຄຳປຶກສາ ແກ່ສະຫະກອນຕາມພາລະບົດບາດຂອງຕົນ ພ້ອມທັງຊຸກຍູ້ ແລະ ສົ່ງເສີມພາກສ່ວນຕ່າງໆ ໃຫ້ບໍລິການດ້ານວິຊາການ ແລະ ໃຫ້ຄຳປຶກສາແກ່ສະຫະກອນ.

**ມາດຕາ 49 ການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ**

ລັດ ສົ່ງເສີມ ສະຫະກອນ ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ ສະຫະກອນ ຄົ້ນຄວ້າ ແລະ ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ເຂົ້າໃນການດຳເນີນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ ໃຫ້ມີຄຸນນະພາບສູງຂຶ້ນ ພ້ອມທັງເປັນມິດກັບສິ່ງແວດລ້ອມ;

2. ຊຸກຍູ້, ສົ່ງເສີມ ສະຫະກອນ ໃນການປະດິດ ແລະ ນຳໃຊ້ນະວັດຕະກຳເຂົ້າໃນ ການອອກແບບ, ການຜະລິດ, ການຕະຫຼາດ, ການບໍລິຫານ ແລະ ອື່ນໆ ເພື່ອພັດທະນາກິດຈະການສະຫະກອນ;

3. ສະໜັບສະໜູນທຶນ ໃຫ້ສະຖາບັນຄົ້ນຄວ້າ ແລະ ສະຖາບັນການສຶກສາ ຄົ້ນຄວ້າປະດິດນະວັດຕະກຳດ້ານຕ່າງໆ ເພື່ອໃຫ້ສະຫະກອນນຳໃຊ້;

4. ສະໜອງທຶນໃນຮູບແບບຕ່າງໆ ໃຫ້ສະຫະກອນນຳໃຊ້ເຂົ້າໃນການປັບປຸງເຕັກໂນໂລຊີ ໃຫ້ທັນສະໄໝ ແລະ ແທດເໝາະກັບການດຳເນີນກິດຈະການສະຫະກອນ.

**ມາດຕາ 50 ການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດ**

ຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ ປະສານສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ແລະ ສະໜັບສະໜູນສະຫະກອນ ເພື່ອໃຫ້ສາມາດເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ດ້ວຍການຈັດງານວາງສະແດງສິນຄ້າ ແລະ ການບໍລິການ, ການໂຄສະນາສິນຄ້າ, ການສຶກສາກ່ຽວກັບຕະຫຼາດ, ການແນະນຳຜະລິດຕະພັນ ແລະ ເຂົ້າຮ່ວມງານວາງສະແດງສິນຄ້າ ທັງພາຍໃນ ແລະ ຕ່າງປະເທດ, ການຈັບຄູ່ທຸລະກິດ ແລະ ການຮ່ວມລົງທຶນເພື່ອຂະຫຍາຍຕະຫຼາດ.

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆ ຕ້ອງສົ່ງເສີມໃຫ້ມີການຊົມໃຊ້ຜະລິດຕະພັນຂອງສະຫະກອນ, ສ້າງເງື່ອນໄຂ ແລະ ໃຫ້ໂອກາດແກ່ສະຫະກອນເປັນຜູ້ສະໜອງສິນຄ້າ ແລະ ການບໍລິການ ໃຫ້ແກ່ການຈັດຕັ້ງຂອງຕົນ.

**ມາດຕາ 51 ການນຳໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ**

ຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ ປະສານສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃຫ້ສະຫະກອນ ປະດິດສ້າງ, ປະດິດຄິດແຕ່ງ, ສ້າງເສດຖະກິດພູມປັນຍາ ພ້ອມທັງສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ສະຫະກອນໃນການຈົດທະບຽນ, ຄຸ້ມຄອງ ແລະ ປົກປ້ອງສິດຕໍ່ຊັບສິນທາງປັນຍາ.

**ມາດຕາ 52 ການສະໜອງ ແລະ ການເຂົ້າເຖິງ ຂໍ້ມູນ ຂ່າວສານ**

ຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສ້າງ ແລະ ພັດທະນາລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບສະຫະກອນ ເພື່ອໃຫ້ສະຫະກອນ ແລະ ສັງຄົມ ໄດ້ເຂົ້າເຖິງສະດວກ, ທັນການ ແລະ ເຊື່ອມຕໍ່ລະບົບຂໍ້ມູນຂ່າວສານ ຂອງກະຊວງກະສິກຳ ແລະ ປ່າໄມ້.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງສະໜອງຂໍ້ມູນທີ່ ຕິດພັນກັບການຜະລິດ, ການຄ້າ, ການບໍລິການ ແລະ ຂໍ້ມູນອື່ນ ຕາມພາລະບົດບາດຂອງຕົນໃຫ້ແກ່ສະຫະກອນ ດ້ວຍຮູບແບບ ເອເລັກໂຕຣນິກ, ປຶ້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ແລະ ສື່ມວນຊົນອື່ນ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບກະຊວງສຶກສາທິການ ແລະ ກິລາ ເພື່ອເອົາວຽກງານສະຫະກອນ ບັນຈຸເຂົ້າໃນຫຼັກສູດການຮຽນ-ການສອນ.

**ມາດຕາ 53 ການສ້າງປະຖົມປັດໄຈໃນການດຳເນີນກິດຈະການ**

ລັດ ສົ່ງເສີມການສ້າງປະຖົມປັດໄຈໃນການດຳເນີນກິດຈະການໃຫ້ແກ່ສະຫະກອນ ດັ່ງນີ້:

1. ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງນະໂຍບາຍ ແລະ ນິຕິກຳ ກ່ຽວກັບການສ້າງປະຖົມປັດໄຈດ້ານການຜະລິດ, ການຄ້າ, ການບໍລິການ ຂອງສະຫະກອນ ໃຫ້ຫຼຸດຜ່ອນຕົ້ນທຶນການຜະລິດ ເປັນຕົ້ນ ຫຼຸດຄ່າໄຟຟ້າ, ຄ່ານ້ຳ;

2. ສະໜອງປັດໄຈການຜະລິດໃຫ້ແກ່ສະຫະກອນກະສິກຳ ແລະ ປ່າໄມ້ ໃນເວລາປະສົບໄພພິບັດ ແລະ ພະຍາດລະບາດ ເປັນຕົ້ນ ຝຸ່ນ, ແນວພັນພືດ, ແນວພັນສັດ, ຢາປາບສັດຕູພືດ, ຢາສັດຕະວະແພດ;

3. ປະເມີນ, ຕິດຕາມ ກວດກາ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມປັດໄຈດ້ານການຜະລິດ, ການຄ້າ, ການບໍລິການ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

## ພາກທີ V
## ສະຫະພັນສະຫະກອນ

**ມາດຕາ 54 ສະຫະພັນສະຫະກອນ**

ສະຫະພັນສະຫະກອນ ແມ່ນ ການຈັດຕັ້ງທາງສັງຄົມ ທີ່ລວມຕົວຂອງສະຫະກອນ ຊຶ່ງສ້າງຕັ້ງຂຶ້ນໂດຍບໍ່ຫວັງຜົນກຳໄລ ເພື່ອຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ໃນການດຳເນີນກິດຈະການ, ສ້າງຄວາມເຂັ້ມແຂງດ້ານວິຊາການ ແລະ ການປົກປ້ອງ ສິດ, ຜົນປະໂຫຍດອັນຊອບທຳຂອງສະມາຊິກ ບົນພື້ນຖານເປັນເຈົ້າຕົນເອງ, ຮັບຜິດຊອບດ້ວຍຕົນເອງ, ເຄື່ອນໄຫວຢ່າງສະເໝີພາບ ໃນການຈັດຕັ້ງ ແລະ ຄຸ້ມຄອງສະຫະພັນສະຫະກອນ.

ສະຫະພັນສະຫະກອນ ມີແຫຼ່ງລາຍຮັບຈາກຄ່າບຳລຸງສະຫະພັນສະຫະກອນ, ເງິນອຸດໜູນຈາກລັດຖະບານ, ເງິນ ຫຼື ຊັບສິນ ທີ່ໄດ້ຮັບການສະໜັບສະໜູນ ຈາກ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລວມທັງລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

ສຳລັບການສ້າງຕັ້ງ, ການຈົດທະບຽນ ແລະ ການເຄື່ອນໄຫວຂອງສະຫະພັນສະຫະກອນ ໃຫ້ປະຕິບັດຕາມລະບຽບການກ່ຽວກັບສະມາຄົມ.

**ມາດຕາ 55 ສິດ ແລະ ໜ້າທີ່ຂອງສະຫະພັນສະຫະກອນ**

ສະຫະພັນສະຫະກອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ມີຄຳເຫັນ ກ່ຽວກັບການສ້າງ ແລະ ປັບປຸງກົດໝາຍ ແລະ ລະບຽບການກ່ຽວກັບສະຫະກອນ;

2. ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບສະຫະກອນໃຫ້ສະມາຊິກຂອງຕົນ ຮັບຮູ້ຢ່າງກວ້າງຂວາງ, ເປັນເອກະພາບໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;

3. ສ້າງ ແລະ ປັບປຸງການຈັດຕັ້ງຂອງຕົນ ໃຫ້ເຕີບໃຫຍ່ເຂັ້ມແຂງ, ນໍາໃຊ້ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;

4. ຊຸກຍູ້ບັນດາສະຫະກອນ ເຂົ້າເປັນສະມາຊິກຕົນ, ຊ່ວຍເຫຼືອ ແລະ ສົ່ງເສີມສະມາຊິກໃນການດໍາເນີນກິດຈະການໃຫ້ເຕີບໃຫຍ່, ເຂັ້ມແຂງ ພ້ອມທັງຄຸ້ມຄອງ, ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງສະມາຊິກ ບົນພື້ນຖານກົດໝາຍ;

5. ເປັນຕົວແທນໃຫ້ສະມາຊິກ ພົວພັນ ຮ່ວມມື, ເຂົ້າຮ່ວມກອງປະຊຸມ, ສະເໜີຄໍາເຫັນຕໍ່ຂະແໜງການທີ່ອະນຸຍາດດໍາເນີນກິດຈະການສະຫະກອນ;

6. ຕິດຕາມການເຄື່ອນໄຫວ, ໃຫ້ຄໍາແນະນໍາ ແລະ ແກ້ໄຂຂໍ້ຂັດແຍ່ງຂອງບັນດາສະມາຊິກ;

7. ສະໜອງ ຂໍ້ມູນ ຂ່າວສານ ໃຫ້ສະມາຊິກຂອງຕົນ ກ່ຽວກັບວຽກງານສະຫະກອນ;

8. ລະດົມຂົນຂວາຍ ແລະ ຮັບເອົາການສະໜັບສະໜູນ, ການຊ່ວຍເຫຼືອການບໍລິຈາກທຶນຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ບົນພື້ນຖານກົດໝາຍ ແລະ ລະບຽບການ;

9. ໃຫ້ການຮ່ວມມື, ປະສານສົມທົບ ກັບອົງການທີ່ກ່ຽວຂ້ອງຂອງລັດ ກ່ຽວກັບວຽກງານສະຫະກອນ;

10. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການເຄື່ອນໄຫວວຽກງານຂອງຕົນ ຕາມການມອບໝາຍ;

11. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ ຂະແໜງການທີ່ອະນຸຍາດດໍາເນີນກິດຈະການສະຫະກອນ ແລະ ກະຊວງກະສິກໍາ ແລະ ປ່າໄມ້ ຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ VI
## ຄະນະກໍາມະການສົ່ງເສີມສະຫະກອນ

### ມາດຕາ 56 ຄະນະກໍາມະການສົ່ງເສີມສະຫະກອນ

ຄະນະກໍາມະການສົ່ງເສີມສະຫະກອນ ແມ່ນ ການຈັດຕັ້ງທີ່ບໍ່ປະຈໍາການ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້, ມີພາລະບົດບາດ ໃນການຄົ້ນຄວ້າ, ຊີ້ນໍາ, ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານສົ່ງເສີມສະຫະກອນ ໂດຍກົມສົ່ງເສີມກະສິກໍາ ແລະ ສະຫະກອນ, ກະຊວງກະສິກໍາ ແລະ ປ່າໄມ້ ເປັນກອງເລຂາ.

ຄະນະກໍາມະການສົ່ງເສີມສະຫະກອນ ປະກອບດ້ວຍ:

| | |
|---|---|
| 1. ລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ | ເປັນປະທານ; |
| 2. ຮອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ | ເປັນຮອງປະທານ ທັງເປັນຜູ້ປະຈໍາການ; |
| 3. ຮອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ | ເປັນຮອງປະທານ; |
| 4. ຮອງລັດຖະມົນຕີກະຊວງການເງິນ | ເປັນຄະນະ; |
| 5. ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ | ເປັນຄະນະ; |
| 6. ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ | ເປັນຄະນະ; |
| 7. ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ | ເປັນຄະນະ; |
| 8. ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ | ເປັນຄະນະ; |
| 9. ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ | ເປັນຄະນະ; |
| 10. ຮອງລັດຖະມົນຕີກະຊວງສາທາລະນະສຸກ | ເປັນຄະນະ; |

11. ຕາງໜ້າສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ;

12. ປະທານສະຫະພັນສະຫະກອນ ເປັນຄະນະ;

13. ຫົວໜ້າກົມສົ່ງເສີມກະສິກຳ ແລະ ສະຫະກອນ ເປັນຄະນະ, ທັງເປັນຫົວໜ້າກອງເລຂາ.

ສຳລັບແຂວງທີ່ມີເງື່ອນໄຂ ແລະ ມີຄວາມພ້ອມ ທາງດ້ານບຸກຄະລາກອນ ກໍສາມາດສ້າງຕັ້ງຄະນະກຳມະການສົ່ງເສີມສະຫະກອນຂຶ້ນ ໂດຍການຕົກລົງຂອງຄະນະກຳມະການປົກຄອງຂັ້ນແຂວງ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງເລຂາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 57 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມສະຫະກອນ

ຄະນະກຳມະການສົ່ງເສີມສະຫະກອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ປະກອບຄຳເຫັນຕໍ່ ແນວທາງ, ນະໂຍບາຍ ໃນການສົ່ງເສີມສະຫະກອນ ໃຫ້ແທດເໝາະ ແລະ ສອດຄ່ອງກັບສະພາບເສດຖະກິດ ແລະ ສັງຄົມ ຂອງຊາດ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບວຽກງານສົ່ງເສີມສະຫະກອນ;
3. ຊຸກຍູ້ ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການຫັນເອົານະໂຍບາຍ, ແຜນການ, ມະຕິຂອງລັດຖະບານ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ກ່ຽວກັບວຽກງານສົ່ງເສີມສະຫະກອນ ເຊື່ອມສານເຂົ້າໃນແຜນພັດທະນາຂະແໜງການຕົນ;
4. ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານສົ່ງເສີມສະຫະກອນ ຂອງບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ;
5. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານສົ່ງເສີມສະຫະກອນຂອງຕົນ ຕໍ່ລັດຖະບານໃນແຕ່ລະໄລຍະ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ກອງທຶນສົ່ງເສີມສະຫະກອນ

### ມາດຕາ 58 ກອງທຶນສົ່ງເສີມສະຫະກອນ

ກອງທຶນສົ່ງເສີມສະຫະກອນ ແມ່ນ ກອງທຶນຂອງລັດທີ່ສ້າງຕັ້ງຂຶ້ນ ເພື່ອສະສົມ ແລະ ລະດົມທຶນຈາກແຫຼ່ງທຶນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ໃຫ້ມີທຶນພຽງພໍ ໃນການຕອບສະໜອງເຂົ້າໃນການສົ່ງເສີມ ແລະ ພັດທະນາສະຫະກອນ ໃຫ້ກວ້າງຂວາງ, ຕໍ່ເນື່ອງ ມີປະສິດທິພາບ, ປະສິດທິຜົນ ໂດຍຢູ່ພາຍໃຕ້ການຄຸ້ມຄອງ ແລະ ຕິດຕາມ ກວດກາ ຂອງກະຊວງກະສິກຳ ແລະ ປ່າໄມ້.

ກອງທຶນສົ່ງເສີມສະຫະກອນ ຂຽນຫຍໍ້ວ່າ "ກສສ".

### ມາດຕາ 59 ທຶນຂອງກອງທຶນສົ່ງເສີມສະຫະກອນ

ທຶນຂອງກອງທຶນສົ່ງເສີມສະຫະກອນ ໄດ້ມາຈາກ:

1. ການປະກອບທຶນຂອງລັດ;
2. ການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກພາຍໃນ ຫຼື ຕ່າງປະເທດ;

3. ການປະກອບສ່ວນຂອງສະຫະກອນ;
4. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍຄວາມສະໝັກໃຈ;
5. ລາຍຮັບຈາກການບໍລິຫານກອງທຶນ;
6. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 60 ການຄຸ້ມຄອງ ແລະ ນຳໃຊ້ກອງທຶນສົ່ງເສີມສະຫະກອນ**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນສົ່ງເສີມສະຫະກອນ ຕ້ອງຕິດພັນກັບວຽກງານສະຫະກອນ, ຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ສຳລັບການຄຸ້ມຄອງ ແລະ ນຳໃຊ້ກອງທຶນສົ່ງເສີມສະຫະກອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ VIII
# ຂໍ້ຫ້າມ

**ມາດຕາ 61 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:
1. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ ແລະ ບໍ່ໃຫ້ຄວາມຮ່ວມມື ໃນວຽກງານສະຫະກອນ;
2. ສວຍໃຊ້, ແອບອ້າງ ຫຼື ນຳໃຊ້ຊື່ຂອງສະຫະກອນ ເຄື່ອນໄຫວໃນທາງທີ່ບໍ່ຖືກຕ້ອງ;
3. ປອມແປງ, ບິດເບືອນຂໍ້ມູນຂອງຕົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເພື່ອຜົນປະໂຫຍດຂອງຕົນ ຊຶ່ງສ້າງຄວາມເສຍຫາຍແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
4. ເປັນສື່ກາງໃນການໃຫ້, ຮັບ ສິນບົນ ຫຼື ຜົນປະໂຫຍດອື່ນ;
5. ແຊກແຊງການຈັດຕັ້ງພາຍໃນສະຫະກອນ;
6. ສ້າງຕັ້ງ ແລະ ເຄື່ອນໄຫວສະຫະກອນ ໂດຍບໍ່ໄດ້ຮັບອະນຸຍາດ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 62 ຂໍ້ຫ້າມສຳລັບສະຫະກອນ**

ຫ້າມສະຫະກອນ ມີພຶດຕິກຳ ດັ່ງນີ້:
1. ດຳເນີນກິດຈະການໂດຍບໍ່ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ;
2. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ບໍ່ຊັດເຈນຕໍ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ປອມແປງ, ບິດເບືອນຂໍ້ມູນຂອງຕົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເພື່ອຜົນປະໂຫຍດຂອງສະຫະກອນ ຊຶ່ງສ້າງຄວາມເສຍຫາຍແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
4. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 63 ຂໍ້ຫ້າມສຳລັບສະຫະພັນສະຫະກອນ**

ຫ້າມສະຫະພັນສະຫະກອນ ມີພຶດຕິກຳ ດັ່ງນີ້:
1. ດຳເນີນກິດຈະການໃດໜຶ່ງ ເພື່ອສະແຫວງຫາກຳໄລ;

2. ແບ່ງແຍກຄວາມສາມັກຄີພາຍໃນສະຫະກອນ ແລະ ສະມາຊິກຂອງສະຫະກອນ;

3. ເຄື່ອນໄຫວທີ່ສົ່ງຜົນກະທົບຕໍ່ ຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດເສລີພາບຂອງບຸກຄົນ ແລະ ຮີດຄອງປະເພນີ ອັນດີງາມຂອງຊາດ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 64 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງສະຫະກອນ ແລະ ສະຫະພັນສະຫະກອນ;

2. ທວງ, ຮຽກ ຫຼື ຮັບ ເອົາສິນບົນ ແລະ ຜົນປະໂຫຍດອື່ນ ຈາກສະຫະກອນ ແລະ ສະຫະພັນສະຫະກອນ;

3. ອອກ ຫຼື ປະຕິເສດ ການອອກໃບທະບຽນ ແລະ ໃບອະນຸຍາດດຳເນີນກິດຈະການ ສະຫະກອນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສະຫະກອນ ແລະ ສະຫະພັນສະຫະກອນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX
## ການຄຸ້ມຄອງ ແລະ ການກວດກາ ວຽກງານສະຫະກອນ
### ໝວດທີ 1
### ການຄຸ້ມຄອງວຽກງານສະຫະກອນ

**ມາດຕາ 65 ອົງການຄຸ້ມຄອງວຽກງານສະຫະກອນ**

ລັດຖະບານ ຄຸ້ມຄອງວຽກງານສະຫະກອນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 66 ສິດ ແລະ ໜ້າທີ່ຂອງຂະແໜງການກະສິກຳ ແລະ ປ່າໄມ້**

ໃນການຄຸ້ມຄອງວຽກງານສະຫະກອນ ຂະແໜງການກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການກ່ຽວກັບວຽກງານສະຫະກອນ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການກ່ຽວກັບວຽກງານສະຫະກອນເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສະຫະກອນ;

4. ອອກ, ໂຈະ ຫຼື ຖອນ ໃບທະບຽນສະຫະກອນ, ໃບອະນຸຍາດດຳເນີນກິດຈະການສະຫະກອນກະສິກຳ ແລະ ປ່າໄມ້;

5. ຊີ້ນຳ, ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດວຽກງານສະຫະກອນ ໂດຍປະສານສົມທົບກັບ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

6. ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສ້າງປະຖົມປັດໄຈໃນການດຳເນີນກິດຈະການ ໃຫ້ແກ່ ສະຫະກອນກະສິກຳ ແລະ ປ່າໄມ້;

7. ໃຫ້ການບໍລິການ ດ້ານວິຊາການ ແລະ ໃຫ້ຄຳປຶກສາ, ການສະໜອງ ແລະ ການເຂົ້າເຖິງ ຂໍ້ມູນ ຂ່າວສານ;

8. ສົ່ງເສີມການຄົ້ນຄວ້າ ແລະ ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ເຂົ້າໃນການດຳເນີນກິດຈະການ ສະຫະກອນ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ສະຫະກອນເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ;

9. ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ກຸ່ມ ເຕີບໃຫຍ່, ເຂັ້ມແຂງ ແລະ ກ້າວຂຶ້ນເປັນສະຫະກອນ;

10. ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານສະຫະກອນ;

11. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບສະຫະກອນ;

12. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກ ງານສະຫະກອນ;

13. ປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການ ຈັດຕັ້ງປະຕິບັດວຽກງານສະຫະກອນ;

14. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະຫະກອນ;

15. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະຫະກອນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ**

ໃນການຄຸ້ມຄອງວຽກງານສະຫະກອນ ຂະແໜງການທີ່ອະນຸຍາດດຳເນີນກິດຈະການສະຫະກອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການກ່ຽວກັບວຽກງານ ສະຫະກອນ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການກ່ຽວກັບວຽກງານ ສະຫະກອນເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສະຫະກອນ;

4. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນກິດຈະການສະຫະກອນ;

5. ຊີ້ນໍາ, ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດວຽກງານສະຫະກອນ ໂດຍປະສານສົມທົບກັບຂະແໜງການກະສິກໍາ ແລະ ປ່າໄມ້, ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

6. ສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ແລະ ສ້າງປະຖົມປັດໄຈໃນການດໍາເນີນກິດຈະການໃຫ້ແກ່ສະຫະກອນ;

7. ໃຫ້ການບໍລິການ ດ້ານວິຊາການ ແລະ ໃຫ້ຄໍາປຶກສາ, ການສະໜອງ ແລະ ການເຂົ້າເຖິງ ຂໍ້ມູນຂ່າວສານ;

8. ສົ່ງເສີມການຄົ້ນຄວ້າ ແລະ ນໍາໃຊ້ເຕັກໂນໂລຊີ ແລະ ນະວັດຕະກໍາ ເຂົ້າໃນການດໍາເນີນກິດຈະການສະຫະກອນ, ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ສະຫະກອນເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ;

9. ສ້າງ, ບໍາລຸງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານສະຫະກອນ;

10. ສ້າງ, ຄຸ້ມຄອງ ແລະ ນໍາໃຊ້ ລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບສະຫະກອນ;

11. ຮັບ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສະຫະກອນ;

12. ປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສະຫະກອນ;

13. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະຫະກອນ;

14. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສະຫະກອນ ຕໍ່ຂັ້ນເທິງຕົນ ແລະ ຂະແໜງການກະສິກໍາ ແລະ ປ່າໄມ້ ຢ່າງເປັນປົກກະຕິ;

15. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ປະສານສົມທົບ ແລະ ຮ່ວມມືກັບຂະແໜງການກະສິກໍາ ແລະ ປ່າໄມ້, ຂະແໜງການທີ່ອະນຸຍາດດໍາເນີນກິດຈະການສະຫະກອນ ໃນການຄຸ້ມຄອງວຽກງານສະຫະກອນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານສະຫະກອນ

**ມາດຕາ 69 ອົງການກວດກາ**

ອົງການກວດກາວຽກງານສະຫະກອນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງວຽກງານສະຫະກອນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 65 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ປະຊາຊົນ.

### ມາດຕາ 70 ເນື້ອໃນການກວດກາ

ການກວດກາວຽກງານສະຫະກອນ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສະຫະກອນ;

2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານສະຫະກອນ;

3. ການປະຕິບັດໜ້າທີ່ຂອງຄະນະບໍລິຫານ, ຄະນະກວດກາ, ຄະນະອຳນວຍການ ຫຼື ຜູ້ຈັດການ, ໜ່ວຍງານ ແລະ ພະນັກງານຂອງສະຫະກອນ;

4. ການສ້າງ ແລະ ປະຕິບັດແຜນການກ່ຽວກັບວຽກງານສະຫະກອນ;

5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

### ມາດຕາ 71 ຮູບການ ການກວດກາ

ການກວດກາວຽກງານສະຫະກອນ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານສະຫະກອນ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ X
## ວັນສ້າງຕັ້ງ, ເຄື່ອງໝາຍ, ກາໝາຍ ແລະ ຕາປະທັບ

### ມາດຕາ 72 ວັນສ້າງຕັ້ງສະຫະກອນ

ວັນສ້າງຕັ້ງສະຫະກອນ ແມ່ນ ວັນທີ 11 ພຶດສະພາ 1978.

ສະຫະກອນ, ຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍການຈັດກິດຈະກຳ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ.

### ມາດຕາ 73 ເຄື່ອງໝາຍ, ກາໝາຍ ແລະ ຕາປະທັບ ຂອງສະຫະກອນ

ສະຫະກອນ ມີ ເຄື່ອງໝາຍ ແລະ ກາໝາຍ ທີ່ເປັນສັນຍາລັກສະເພາະຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຊຶ່ງໄດ້ຮັບຮອງຈາກກະຊວງກະສິກຳ ແລະ ປ່າໄມ້.

ສະຫະກອນ ມີ ຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຕາມລະບຽບການ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 74 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານສະຫະກອນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 75 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 76 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 77 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ກັນຍາ 2024 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນ ຕົ້ນໄປ.

ສະຫະກອນໃດ ທີ່ສ້າງຕັ້ງກ່ອນກົດໝາຍສະບັບນີ້ ໃຫ້ແຈ້ງຂຶ້ນທະບຽນສະຫະກອນນຳຂະແໜງການກະສິກຳ ແລະ ປ່າໄມ້ ຖ້າຫາກມີຈຸດປະສົງຕ້ອງການຮັບນະໂຍບາຍສົ່ງເສີມສະຫະກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ໃຫ້ສະເໜີຕໍ່ຂະແໜງການທີ່ອອກອະນຸຍາດດຳເນີນກິດຈະການສະຫະກອນ ແລະ ຂະແໜງການທີ່ກ່ຽວຂ້ອງພິຈາລະນາ ແລະ ແຈ້ງໃຫ້ຜູ້ຮ້ອງຂໍປະຕິບັດ ພາຍໃນເວລາ ໜຶ່ງຮ້ອຍຊາວວັນ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ